ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ...006.../ປປທ

ນະຄອນຫຼວງວຽງຈັນ, ວັນທີ...5 ມັງກອນ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 106/ສພຊ, ລົງວັນທີ 20 ພະຈິກ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 36/ຄປຈ, ລົງວັນທີ 20 ທັນວາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**

ສແກນດ້ວຍ CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 106 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 11 / 23

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ໃນຕອນເຊົ້າຂອງວັນທີ 15 ພະຈິກ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 20 ພະຈິກ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 48 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 20 ພະຈິກ 2023

# ກົດໝາຍວ່າດ້ວຍການປິ່ນປົວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານປິ່ນປົວ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ຄວາມປອດໄພ ແລະ ທັນສະໄໝ ແນໃສ່ ຮັບປະກັນໃຫ້ພົນລະເມືອງທຸກຄົນ ໄດ້ຮັບການບໍລິການປິ່ນປົວ ແລະ ຟື້ນຟູໜ້າທີ່ການ ຢ່າງທົ່ວເຖິງ, ສະເໝີພາບ, ຍຸຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຜູ້ຮັບ ແລະ ຜູ້ໃຫ້ບໍລິການປິ່ນປົວ, ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 (ປັບປຸງ) ການປິ່ນປົວ

ການປິ່ນປົວ ແມ່ນ ການບໍລິການຄົນເຈັບ ດ້ວຍ ສະຕິ, ຄວາມຮັບຜິດຊອບ, ສິລະປະ, ທັກສະ, ຈັນຍາບັນ, ຈັນຍາທຳ ຂອງບຸກຄະລາກອນການແພດ ເພື່ອກວດ, ຊອກຄົ້ນຫາພະຍາດ, ບົ່ງມະຕິພະຍາດ, ປະຕິບັດເຕັກນິກການແພດ, ໃຫ້ບໍລິການປິ່ນປົວ ແລະ ຟື້ນຟູໜ້າທີ່ການ ໂດຍສົມທົບລະຫວ່າງການແພດພື້ນເມືອງ ແລະ ການແພດສະໄໝໃໝ່ ດ້ວຍການນຳໃຊ້ ຢາຫຼວງ, ຢາພື້ນເມືອງ, ວິທີການທາງສັງຄົມ ແລະ ການສຶກສາ ເພື່ອເຮັດໃຫ້ຄົນເຈັບ ໄດ້ຮັບການ ພັກຜ່ອນ, ຟື້ນຟູສຸຂະພາບ, ຫາຍຈາກພະຍາດ ແລະ ມີສຸຂະພາບດີ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສຸຂະພາບດີ** ໝາຍເຖິງ ສະພາບທາງ ດ້ານຮ່າງກາຍ, ຈິດໃຈ, ມັນສະໝອງ ຂອງຄົນ, ສະພາບແວດລ້ອມຂອງ ສັງຄົມທີ່ດີ ຫາກບໍ່ແມ່ນພຽງແຕ່ສະພາບບໍ່ເປັນພະຍາດ ຫຼື ບໍ່ພິການ ເທົ່ານັ້ນ;
2. **ຈັນຍາທຳ** ໝາຍເຖິງ ການເຄົາລົບ ແລະ ການປະຕິບັດຈັນຍາບັນ ຂອງຜູ້ປະກອບວິຊາຊີບປິ່ນປົວ;
3. **ໂຮງໝໍ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ຫຼື ຂອງເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງ ສາທາລະນະສຸກ;
4. **ໂຮງໝໍສູນກາງ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ຊຶ່ງຕັ້ງຢູ່ນະຄອນຫຼວງ ທີ່ໃຫ້ການບໍລິການ ປິ່ນປົວຂັ້ນສູງສຸດ, ມີຜູ້ຊ່ຽວຊານລົງເລິກສະເພາະທາງ ແລະ ສາມາດຮອງຮັບການສົ່ງຕໍ່ຄົນເຈັບຈາກໂຮງໝໍຂັ້ນຕ່າງໆ;



สแกนด้วย CamScanner

5. **ໂຮງໝໍມະຫາວິທະຍາໄລ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ພາຍໃຕ້ການຄຸ້ມຄອງຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ ທີ່ໃຫ້ການບໍລິການປິ່ນປົວຂັ້ນສູງສຸດ, ມີຜູ້ຊ່ຽວຊານລົງເລິກສະເພາະທາງ ແລະ ສາມາດຮອງຮັບການສົ່ງຕໍ່ຄົນເຈັບຈາກໂຮງໝໍຂັ້ນຕ່າງໆ ທັງເປັນສະຖານທີ່ສຳລັບການຮຽນ-ການສອນຂອງ ນັກສຶກສາ, ນັກຄົ້ນຄວ້າ ກ່ຽວກັບວິທະຍາສາດສຸຂະພາບ;

6. **ໂຮງໝໍພາກ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ຊຶ່ງຕັ້ງຢູ່ແຂວງໃດໜຶ່ງ ທີ່ໃຫ້ການບໍລິການປິ່ນປົວຂັ້ນສູງສຸດ, ມີຜູ້ຊ່ຽວຊານລົງເລິກສະເພາະທາງ ແລະ ສາມາດຮອງຮັບການສົ່ງຕໍ່ຄົນເຈັບຈາກໂຮງໝໍແຂວງອ້ອມຂ້າງ;

7. **ໂຮງໝໍແຂວງ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ຊຶ່ງຕັ້ງຢູ່ແຂວງ ທີ່ໃຫ້ການບໍລິການປິ່ນປົວຂັ້ນສູງ ແລະ ສາມາດຮອງຮັບການສົ່ງຕໍ່ຄົນເຈັບຈາກໂຮງໝໍເມືອງ, ເທດສະບານ, ນະຄອນ ແລະ ສຸກສາລາ;

8. **ໂຮງໝໍເມືອງ, ເທດສະບານ, ນະຄອນ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ຊຶ່ງຕັ້ງຢູ່ ເມືອງ, ເທດສະບານ, ນະຄອນ ທີ່ໃຫ້ການບໍລິການປິ່ນປົວຂັ້ນກາງ ແລະ ຮອງຮັບການສົ່ງຕໍ່ ຄົນເຈັບຈາກສຸກສາລາ;

9. **ສຸກສາລາ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວຂອງລັດ ຊຶ່ງຕັ້ງຢູ່ບ້ານໃດໜຶ່ງ ທີ່ໃຫ້ການບໍລິການປິ່ນປົວຂັ້ນຕົ້ນ ຢູ່ບ້ານ ແລະ ກຸ່ມບ້ານ;

10. **ສູນປິ່ນປົວສະເພາະທາງ ຫຼື ໂຮງໝໍສະເພາະທາງ** ໝາຍເຖິງ ສະຖານທີ່ບໍລິການປິ່ນປົວ ສະເພາະທາງໃດໜຶ່ງ ເຊັ່ນ ຕາ, ຫູ, ດັງ, ຄໍ, ຜິວໜັງ, ແຂ້ວ, ຫົວໃຈເສັ້ນເລືອດ, ຟື້ນຟູໜ້າທີ່ການ, ມະເຮັງ, ສັນຍະກຳຕົບແຕ່ງ, ເສີມຄວາມງາມ ລວມທັງສູນຈຸລັງຕົ້ນກຳເນີດ ແລະ ອື່ນໆ;

11. **ຖົງຢາປະຈຳບ້ານ** ໝາຍເຖິງ ຖົງຢາທີ່ຈຳເປັນພື້ນຖານສຳລັບເຂດຫ່າງໄກສອກຫຼີກ ທີ່ບໍ່ມີສຸກສາລາ ຫຼື ມີຄວາມຫຍຸ້ງຍາກໃນການເຂົ້າເຖິງສຸກສາລາ ເພື່ອນຳໃຊ້ປິ່ນປົວຂັ້ນຕົ້ນ ສຳລັບພະຍາດທີ່ບໍ່ຮ້າຍແຮງທີ່ເກີດຂຶ້ນຕາມລະດູການ ເປັນຕົ້ນ ພະຍາດຖອກທ້ອງ, ເປັນໄຂ້, ເປັນຫວັດ ລວມທັງປິ່ນປົວບາດແຜເລັກນ້ອຍ;

12. **ແພດປິ່ນປົວ** ໝາຍເຖິງ ຜູ້ມີວຸດທິການສຶກສາ, ຄວາມຮູ້, ຄວາມສາມາດ, ປະສົບການ ແລະ ຖືກມອບໝາຍຈາກການຈັດຕັ້ງ ໃນການບົ່ງມະຕິພະຍາດ ແລະ ປິ່ນປົວ ເປັນຕົ້ນ ທ່ານໝໍ, ທັນຕະແພດ;

13. **ຟື້ນຟູໜ້າທີ່ການ** ໝາຍເຖິງ ວິທີການ ແລະ ຂະບວນການທີ່ຈະນຳຄົນເຈັບ ກັບໄປສູ່ການມີຊີວິດທີ່ປົກກະຕິ ຫຼື ໃກ້ຄຽງ;

14. **ຫັດຖະການທາງການແພດ** ໝາຍເຖິງ ການປະຕິບັດວິທີການທາງການແພດ ດ້ວຍການນຳໃຊ້ ຫຼື ບໍ່ນຳໃຊ້ອຸປະກອນການແພດ ໃຫ້ຖືກຕ້ອງ ຕາມຫຼັກວິຊາການ ຕໍ່ຮ່າງກາຍຄົນເຈັບ;

15. **ວິທີການທາງສັງຄົມ** ໝາຍເຖິງ ການປ່ຽນແປງສັງຄົມ ແລະ ສິ່ງແວດລ້ອມ ທີ່ມີອິດທິພົນຕໍ່ສະພາບຈິດໃຈຂອງຄົນເຈັບ ດ້ວຍການໃຊ້ສັງຄົມ ແລະ ຄອບຄົວບຳບັດ;

16. **ການສຶກສາ** ໝາຍເຖິງ ການໃຫ້ຄຳແນະນຳ ແລະ ການໃຫ້ສຸຂະສຶກສາແກ່ຄົນເຈັບ ກ່ຽວກັບວິທີປະຕິບັດຕົນເອງ;

17. **ວິຊາຊີບປິ່ນປົວ** ໝາຍເຖິງ ຄວາມຮູ້ ຄວາມຊຳນານງານ ທີ່ຈຳເປັນໃນການປະກອບອາຊີບປິ່ນປົວ ເປັນຕົ້ນ ທ່ານໝໍ, ພະຍາບານ, ຜະດຸງຄັນ, ທັນຕະແພດ, ເພສັດຊະກອນ, ນັກກາຍະພາບບຳບັດ;

18. **ສັນຍະກຳຕົບແຕ່ງ** ໝາຍເຖິງ ການຜ່າຕັດປົວແປງອະໄວຍະວະໃດໜຶ່ງໃຫ້ມີໜ້າທີ່ການປົກກະຕິ ຫຼື ໃກ້ຄຽງ ເປັນຕົ້ນ ແຜຈ່ອງດຶງ, ສົບແວ່ງ ເພດານໂວ່.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານປິ່ນປົວ**

ລັດ ເອົາໃຈໃສ່ ປັບປຸງວຽກງານປິ່ນປົວໃຫ້ມີຄຸນນະພາບ ຖືກຕາມມາດຕະຖານທີ່ກຳນົດໄວ້ ແລະ ສະໜອງການບໍລິການດ້ານສາທາລະນະສຸກ ຢ່າງທົ່ວເຖິງ ຕາມແຜນພັດທະນາສາທາລະນະສຸກ ໃນແຕ່ລະໄລຍະ, ສົ່ງເສີມການບໍລິການປິ່ນປົວ ໂດຍສົມທົບ ລະຫວ່າງ ການແພດພື້ນເມືອງ ແລະ ການແພດສະໄໝໃໝ່ ແນໃສ່ເຮັດໃຫ້ພົນລະ



สแกนด้วย CamScanner

ເມືອງທຸກຄົນມີສຸຂະພາບດີ, ແຂງແຮງ ໂດຍສະເພາະແມ່ ແລະ ເດັກ, ປະຊາຊົນຜູ້ທຸກຍາກ, ຜູ້ຢູ່ຫ່າງໄກສອກຫຼີກ, ຜູ້ພິການ, ຜູ້ເສຍອົງຄະ ແລະ ຜູ້ອາຍຸສູງ.

ລັດ ສົ່ງເສີມວຽກງານປິ່ນປົວ ດ້ວຍການສະໜອງ ງົບປະມານ, ພາຫະນະ, ອຸປະກອນ, ປະກອບບຸກຄະລາກອນ ເຂົ້າໃນວຽກງານປິ່ນປົວ ຢ່າງເໝາະສົມ, ປະຕິບັດນະໂຍບາຍປິ່ນປົວ ຕາມລະບຽບການ ລວມທັງການສົ່ງເສີມສະຖານທີ່ບໍລິການປິ່ນປົວຂອງລັດ ໃຫ້ຫັນໄປສູ່ກົນໄກກຸ້ມຕົນເອງ ເທື່ອລະກ້າວ.

ລັດ ຊຸກຍູ້ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນສະໜອງອຸປະກອນ, ເຄື່ອງມືການແພດທີ່ທັນສະໄໝ ໃສ່ໂຮງໝໍຂອງລັດ ຢ່າງມີຈຸດສຸມ ແລະ ລົງທຶນ ໃສ່ການບໍລິການປິ່ນປົວ ຂັ້ນສູງ ແລະ ຂັ້ນສູງສຸດ.

### ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານປິ່ນປົວ

ວຽກງານປິ່ນປົວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາສາທາລະນະສຸກ ໃນແຕ່ລະໄລຍະ;
2. ເຄົາລົບສິດໃນການມີຊີວິດຂອງມະນຸດ;
3. ຮັບປະກັນການປິ່ນປົວ ຢ່າງສະເໝີພາບ, ມີຄຸນນະພາບ, ຍຸຕິທຳ, ວ່ອງໄວ, ໂປ່ງໃສ, ທັນສະໄໝ ແລະ ຖືກຕ້ອງ ຕາມຫຼັກວິທະຍາສາດການແພດ ແລະ ສາມາດກວດສອບໄດ້;
4. ມີ ມະນຸດສະທຳ, ຈັນຍາບັນ, ຈັນຍາທຳ ແລະ ຄວາມຮັບຜິດຊອບຕໍ່ວິຊາຊີບຂອງຕົນ;
5. ມີການເຫັນດີ ຫຼື ຍິນຍອມຂອງຄົນເຈັບ ຫຼື ຍາດພີ່ນ້ອງ ເມື່ອມີຄວາມຈຳເປັນ.

### ມາດຕາ 6 ສິດ ແລະ ພັນທະ ຂອງພົນລະເມືອງໃນການປິ່ນປົວ

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກ ເພດ, ໄວ, ເຜົ່າ, ເຊື້ອຊາດ, ຖານະທາງດ້ານເສດຖະກິດ-ສັງຄົມ, ລະດັບການສຶກສາ, ສາສະໜາ ແລະ ຄວາມເຊື່ອຖື ລ້ວນແຕ່ມີສິດສະເໝີພາບໄດ້ຮັບການບໍລິການປິ່ນປົວໃນເວລາເຈັບເປັນ, ຕຳນິ ສົ່ງຂ່າວ ຫຼື ຮ້ອງທຸກ ຖ້າຕົນເຫັນວ່າການປິ່ນປົວນັ້ນ ຫາກບໍ່ຖືກຕ້ອງຕາມຫຼັກວິຊາການ, ບໍ່ຍຸຕິທຳ ແລະ ມີສິດອື່ນກ່ຽວກັບການປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ພົນລະເມືອງທຸກຄົນ ມີພັນທະ ເຄົາລົບກົດລະບຽບຂອງສະຖານທີ່ບໍລິການປິ່ນປົວ, ປະຕິບັດ ຕາມການແນະນຳຂອງຜູ້ປະກອບວິຊາຊີບປິ່ນປົວ ແລະ ປະຕິບັດພັນທະອື່ນ ກ່ຽວກັບການປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

### ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານປິ່ນປົວ ຢູ່ ສປປ ລາວ.

### ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປິ່ນປົວດ້ວຍການຄົ້ນຄວ້າ, ແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ຄວາມຮູ້, ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກໂນໂລຊີການແພດ, ການສ້າງບຳລຸງບຸກຄະລາກອນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.



สแกนด้วย CamScanner

## ພາກທີ II
## ລະບົບບໍລິການປິ່ນປົວ

**ມາດຕາ 9 ລະບົບບໍລິການປິ່ນປົວ**

ລະບົບບໍລິການປິ່ນປົວ ມີ ດັ່ງນີ້:

1. ການບໍລິການປິ່ນປົວຂອງລັດ;
2. ການບໍລິການປິ່ນປົວຂອງເອກະຊົນ;
3. ການບໍລິການປິ່ນປົວຂອງລັດ ຮ່ວມກັບເອກະຊົນ.

**ມາດຕາ 10 (ປັບປຸງ) ການບໍລິການປິ່ນປົວຂອງລັດ**

ການບໍລິການປິ່ນປົວຂອງລັດ ມີ ສີ່ຂັ້ນ ດັ່ງນີ້:

1. ການບໍລິການປິ່ນປົວຂັ້ນຕົ້ນ;
2. ການບໍລິການປິ່ນປົວຂັ້ນກາງ;
3. ການບໍລິການປິ່ນປົວຂັ້ນສູງ;
4. ການບໍລິການປິ່ນປົວຂັ້ນສູງສຸດ.

ການບໍລິການປິ່ນປົວການແພດພື້ນເມືອງ ສາມາດດຳເນີນຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ສະຖານທີ່ບໍລິການປິ່ນປົວຂອງເອກະຊົນ.

**ມາດຕາ 11 (ປັບປຸງ) ການບໍລິການປິ່ນປົວຂັ້ນຕົ້ນ**

ການບໍລິການປິ່ນປົວຂັ້ນຕົ້ນ ແມ່ນ ການຈັດຕັ້ງປະຕິບັດການປິ່ນປົວຢູ່ສຸກສາລາ ຕາມມາດຕະຖານທີ່ກະຊວງສາທາລະນະສຸກ ກຳນົດ. ສຳລັບບ້ານທີ່ຢູ່ເຂດຫ່າງໄກສອກຫຼີກ ທີ່ບໍ່ມີສຸກສາລາ ຫຼື ມີຄວາມຫຍຸ້ງຍາກໃນການເຂົ້າເຖິງສຸກສາລາ ຂະແໜງການສາທາລະນະສຸກ ປະກອບຖົງຢາປະຈຳບ້ານ ໂດຍມອບໃຫ້ອາສາສະໝັກສາທາລະນະສຸກບ້ານ ເປັນຜູ້ຮັບຜິດຊອບ.

**ມາດຕາ 12 (ປັບປຸງ) ການບໍລິການປິ່ນປົວຂັ້ນກາງ**

ການບໍລິການປິ່ນປົວຂັ້ນກາງ ແມ່ນ ການຈັດຕັ້ງປະຕິບັດການປິ່ນປົວຢູ່ໂຮງໝໍ ເມືອງ, ເທດສະບານ, ນະຄອນ ຕາມມາດຕະຖານທີ່ກະຊວງສາທາລະນະສຸກ ກຳນົດ.

**ມາດຕາ 13 (ປັບປຸງ) ການບໍລິການປິ່ນປົວຂັ້ນສູງ**

ການບໍລິການປິ່ນປົວຂັ້ນສູງ ແມ່ນ ການຈັດຕັ້ງປະຕິບັດການປິ່ນປົວຢູ່ໂຮງໝໍແຂວງ ຕາມມາດຕະຖານທີ່ກະຊວງສາທາລະນະສຸກ ກຳນົດ.

**ມາດຕາ 14 (ປັບປຸງ) ການບໍລິການປິ່ນປົວຂັ້ນສູງສຸດ**

ການບໍລິການປິ່ນປົວຂັ້ນສູງສຸດ ແມ່ນ ການຈັດຕັ້ງປະຕິບັດການປິ່ນປົວຢູ່ ໂຮງໝໍສູນກາງ, ໂຮງໝໍມະຫາວິທະຍາໄລ, ໂຮງໝໍພາກ ແລະ ສູນປິ່ນປົວສະເພາະທາງ ຫຼື ໂຮງໝໍສະເພາະທາງ ຕາມມາດຕະຖານທີ່ກະຊວງສາທາລະນະສຸກ ກຳນົດ.



สแกนด้วย CamScanner

ມາດຕາ 15 ການເຊື່ອມຕໍ່ການບໍລິການປິ່ນປົວຂອງລັດ

ໃນການນໍາໃຊ້ການບໍລິການປິ່ນປົວຂອງລັດນັ້ນ ຄົນເຈັບ ມີສິດໄດ້ຮັບການປິ່ນປົວຢູ່ຂັ້ນຕົ້ນ, ຕໍ່ເນື່ອງໄປຫາຂັ້ນກາງ, ຂັ້ນສູງ ແລະ ຂັ້ນສູງສຸດ ຕາມອາການເບົາ ຫຼື ໜັກ ຂອງພະຍາດ. ໃນກໍລະນີສຸກເສີນ ຫຼື ເປັນພະຍາດຮ້າຍແຮງນັ້ນ ຄົນເຈັບ ສາມາດນໍາໃຊ້ການບໍລິການປິ່ນປົວຂັ້ນກາງ, ຂັ້ນສູງ ຫຼື ຂັ້ນສູງສຸດ ໂດຍກົງກໍໄດ້.

ໃນການບໍລິການປິ່ນປົວຂອງລັດນັ້ນ ໂຮງໝໍຂັ້ນລຸ່ມ ມີສິດສະເໜີຕໍ່ໂຮງໝໍຂັ້ນເທິງ ກ່ຽວກັບການປິ່ນປົວ ແລະ ໂຮງໝໍຂັ້ນເທິງ ມີຄວາມຮັບຜິດຊອບລົງກວດກາ, ແນະນໍາ ແລະ ໃຫ້ການຊ່ວຍເຫຼືອແກ່ໂຮງໝໍຂັ້ນລຸ່ມ.

ມາດຕາ 16 (ປັບປຸງ) ການບໍລິການປິ່ນປົວຂອງເອກະຊົນ

ການບໍລິການປິ່ນປົວຂອງເອກະຊົນ ແມ່ນ ການຈັດຕັ້ງປະຕິບັດການປິ່ນປົວ ຢູ່ສະຖານທີ່ບໍລິການປິ່ນປົວຂອງເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

ສະຖານທີ່ບໍລິການປິ່ນປົວຂອງເອກະຊົນ ມີ ດັ່ງນີ້:

1. ໂຮງໝໍເອກະຊົນ;
2. ສູນປິ່ນປົວ ຫຼື ສູນການແພດເອກະຊົນ;
3. ຫ້ອງກວດພະຍາດເອກະຊົນ.

ມາດຕາ 17 (ໃໝ່) ໂຮງໝໍເອກະຊົນ

ໂຮງໝໍເອກະຊົນ ແມ່ນ ສະຖານທີ່ບໍລິການປິ່ນປົວຂອງເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຊຶ່ງປະກອບດ້ວຍ ອາຄານ, ອຸປະກອນການແພດ, ຕຽງນອນ, ຜູ້ປະກອບວິຊາຊີບ ແລະ ໃຫ້ການບໍລິການປິ່ນປົວ ທົ່ວໄປ ຫຼື ສະເພາະທາງ ຕາມລະບຽບການ.

ໂຮງໝໍເອກະຊົນ ມີ ສາມຂະໜາດ ດັ່ງນີ້:

1. ຂະໜາດໃຫຍ່ ແຕ່ ໜຶ່ງຮ້ອຍຕຽງ ຂຶ້ນໄປ;
2. ຂະໜາດກາງ ແຕ່ ສາມສິບເອັດ ຫາ ເກົ້າສິບເກົ້າຕຽງ;
3. ຂະໜາດນ້ອຍ ແຕ່ ສິບຫ້າ ຫາ ສາມສິບຕຽງ.

ມາດຕາ 18 (ໃໝ່) ສູນປິ່ນປົວ ຫຼື ສູນການແພດເອກະຊົນ

ສູນປິ່ນປົວ ຫຼື ສູນການແພດເອກະຊົນ ແມ່ນ ສະຖານທີ່ບໍລິການປິ່ນປົວຂອງເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຊຶ່ງປະກອບດ້ວຍ ອາຄານ, ອຸປະກອນການແພດ, ຜູ້ປະກອບວິຊາຊີບປິ່ນປົວ ເພື່ອໃຫ້ບໍລິການປິ່ນປົວ ໂດຍບໍ່ມີຕຽງນອນປິ່ນປົວແຮມຄືນສໍາລັບຄົນເຈັບ.

ສູນປິ່ນປົວ ຫຼື ສູນການແພດເອກະຊົນ ມີ ສູນປິ່ນປົວ ຫຼື ສູນການແພດທົ່ວໄປ, ສະເພາະທາງ ແລະ ການແພດພື້ນເມືອງ.

ມາດຕາ 19 (ປັບປຸງ) ຫ້ອງກວດພະຍາດເອກະຊົນ

ຫ້ອງກວດພະຍາດເອກະຊົນ ແມ່ນ ສະຖານທີ່ບໍລິການປິ່ນປົວຂອງຜູ້ປະກອບວິຊາຊີບປິ່ນປົວ ທີ່ຖືສັນຊາດລາວ ແລະ ສາມາດມີຫ້ອງກວດພະຍາດແຫ່ງດຽວ ເທົ່ານັ້ນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຊຶ່ງປະກອບດ້ວຍ ອາຄານ, ອຸປະກອນການແພດ, ຜູ້ປະກອບວິຊາຊີບປິ່ນປົວ ເພື່ອໃຫ້ບໍລິການປິ່ນປົວ ໂດຍບໍ່ມີຕຽງນອນປິ່ນປົວແຮມຄືນສໍາລັບຄົນເຈັບ.



สแกนด้วย CamScanner

ໃນກໍລະນີເຈົ້າຂອງຫ້ອງກວດພະຍາດເອກະຊົນ ເສຍຊີວິດ ຫຼື ຕິດຂັດ ໂດຍບໍ່ສາມາດດຳເນີນກິດຈະການດ້ວຍຕົນເອງໄດ້ນັ້ນ ບຸກຄົນອື່ນຈະນຳໃຊ້ຫ້ອງກວດພະຍາດດັ່ງກ່າວໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

**ມາດຕາ 20 (ປັບປຸງ) ການບໍລິການປິ່ນປົວຂອງລັດ ຮ່ວມກັບເອກະຊົນ**

ການບໍລິການປິ່ນປົວຂອງລັດຮ່ວມກັບເອກະຊົນ ແມ່ນ ການຮ່ວມມື ລະຫວ່າງ ລັດ ແລະ ເອກະຊົນ ໂດຍໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ໃນການພັດທະນາຄຸນນະພາບຂອງການບໍລິການ ພາຍໃນສະຖານທີ່ບໍລິການປິ່ນປົວຂອງລັດ ດ້ວຍການ ກໍ່ສ້າງ, ປັບປຸງໂຄງລ່າງພື້ນຖານ, ປະກອບອຸປະກອນການແພດ, ການບໍລິການດ້ານວິຊາການ ແລະ ດ້ານອື່ນ ຕາມລະບຽບການ.

**ມາດຕາ 21 (ປັບປຸງ) ອຸປະກອນການແພດ**

ອຸປະກອນການແພດ ແມ່ນ ເຄື່ອງມືການແພດ ທີ່ນຳໃຊ້ເຂົ້າໃນການ ບົ່ງມະຕິພະຍາດ, ປິ່ນປົວ ຕາມຈຸດປະສົງ ແລະ ຄຳແນະນຳຂອງຜູ້ຜະລິດ ຊຶ່ງອາດນຳໃຊ້ດ່ຽວ ຫຼື ນຳໃຊ້ຮ່ວມກັນກັບຊະນິດອື່ນ, ນຳໃຊ້ເທື່ອດຽວ ຫຼື ຫຼາຍເທື່ອ.

ອຸປະກອນການແພດຂອງສະຖານທີ່ບໍລິການປິ່ນປົວ ຂອງລັດ ແລະ ເອກະຊົນ ຕ້ອງໃຫ້ຖືກກັບມາດຕະຖານ ຂອງກະຊວງສາທາລະນະສຸກວາງອອກ.

ອຸປະກອນການແພດ ທີ່ເປ່ເພ ບໍ່ສາມາດສ້ອມແປງໄດ້ ຫຼື ໝົດອາຍຸການນຳໃຊ້ ຕ້ອງຢຸດເຊົາການນຳໃຊ້ ແລະ ທຳລາຍ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 (ໃໝ່) ລະບົບບັນທຶກຂໍ້ມູນ ຄົນເຈັບ ແລະ ການບໍລິການ**

ສະຖານທີ່ບໍລິການປິ່ນປົວທຸກແຫ່ງ ນັບທັງພາກລັດ ແລະ ພາກເອກະຊົນ ຕ້ອງມີລະບົບບັນທຶກຂໍ້ມູນຄົນເຈັບ, ການລາຍງານຂໍ້ມູນການບໍລິການ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງສາທາລະນະສຸກ ກຳນົດ.

## ພາກທີ III
## ການປະກອບວິຊາຊີບປິ່ນປົວ ແລະ ຄະນະກຳມະການວິຊາຊີບປິ່ນປົວ
### ໝວດທີ 1
### ການປະກອບວິຊາຊີບປິ່ນປົວ

**ມາດຕາ 23 (ໃໝ່) ຜູ້ປະກອບວິຊາຊີບປິ່ນປົວ**

ຜູ້ປະກອບວິຊາຊີບປິ່ນປົວ ແມ່ນ ຜູ້ມີໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ທີ່ອອກໃຫ້ໂດຍສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ແລະ ບັນທຶກເຂົ້າໃນຖານຂໍ້ມູນ ຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ.

**ມາດຕາ 24 (ປັບປຸງ) ເງື່ອນໄຂຂອງຜູ້ປະກອບວິຊາຊີບປິ່ນປົວ**

ຜູ້ປະກອບວິຊາຊີບປິ່ນປົວ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຮຽນຈົບວິຊາການແພດ, ມີປະກາສະນີຍະບັດ ດ້ານການແພດສາຂາໃດໜຶ່ງ ຢູ່ ສປປ ລາວ ຫຼື ຕ່າງປະເທດ ທີ່ຮັບຮູ້ໂດຍກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາ;

2. ມີຈັນຍາບັນ, ຈັນຍາທຳ, ຄຸນສົມບັດດີ, ມີປະສົບການ ແລະ ບົດຮຽນດ້ານວິຊາຊີບປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ຫຼື ເອກະຊົນ;

3. ມີສຸຂະພາບດີ ໂດຍມີການຢັ້ງຢືນຈາກແພດປິ່ນປົວ;



สแกนด้วย CamScanner

4. ບໍ່ເຄີຍຖືກລົງວິໄນທາງດ້ານວິຊາຊີບປິ່ນປົວ ຫຼື ຖືກລົງໂທດທາງອາຍາ ຍ້ອນການກະທຳຜິດໂດຍເຈດຕະນາ;

5. ໄດ້ຜ່ານການສອບເສັງ ລະດັບຊາດ ແລະ ໄດ້ຮັບການຢັ້ງຢືນ ຈາກສະພາຄຸ້ມຄອງວິຊາຊີບ ສາທາລະນະສຸກ.

**ມາດຕາ 25 (ປັບປຸງ) ຄວາມຮັບຜິດຊອບຂອງຜູ້ປະກອບວິຊາຊີບປິ່ນປົວ**

ຜູ້ປະກອບວິຊາຊີບປິ່ນປົວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ອອກຄຳສັ່ງ, ແນະນຳວິທີການ ແລະ ດຳເນີນຫັດຖະການທາງການແພດ ຢ່າງມີຄຸນນະພາບ, ປອດໄພ ແລະ ຖືກຕ້ອງ ຕາມຫຼັກວິທະຍາສາດການແພດ;

2. ຊີ້ແຈງ ເຖິງຜົນໄດ້, ຜົນເສຍ, ຜົນສະທ້ອນຂອງການກວດ ແລະ ການປິ່ນປົວ ທີ່ສາມາດເຮັດໄດ້, ຖ້າເຫັນວ່າ ສະພາບຂອງຄົນເຈັບບໍ່ຖືກກັບວິຊາສະເພາະ ຫຼື ຄວາມຊຳນານຂອງຕົນແລ້ວ ຕ້ອງແນະນຳໃຫ້ຄົນເຈັບ ຫຼື ຍາດພີ່ນ້ອງຂອງຜູ້ກ່ຽວ ໄປປິ່ນປົວຢູ່ສະຖານທີ່ ທີ່ເໝາະສົມ;

3. ມີຄວາມຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ທຸກການດຳເນີນຫັດຖະການທາງການແພດ ຊຶ່ງເຮັດໃຫ້ເກີດບາດເຈັບ ຕ້ອງມີຂໍ້ມູນອ້າງອີງຊັດເຈນ ດ້ານການແພດ ແລະ ຕ້ອງແຈ້ງໃຫ້ຄົນເຈັບ ຫຼື ຍາດພີ່ນ້ອງຂອງຜູ້ກ່ຽວ ຮັບຮູ້ ແລະ ເຫັນດີເສຍກ່ອນ, ເວັ້ນເສຍແຕ່ກໍລະນີສຸກເສີນ ຫຼື ຄົນເຈັບເສຍສະຕິ ທີ່ບໍ່ມີຍາດພີ່ນ້ອງ.

**ມາດຕາ 26 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ປະກອບວິຊາຊີບປິ່ນປົວ**

ຜູ້ປະກອບວິຊາຊີບປິ່ນປົວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດພະຍາດ;
2. ບົ່ງມະຕິພະຍາດ;
3. ອອກໃບສັ່ງປິ່ນປົວ;
4. ດຳເນີນຫັດຖະການທາງການແພດ;
5. ວາງຢາ;
6. ຈ່າຍຢາ;
7. ແນະນຳດ້ານການແພດ;
8. ໃຫ້ການພະຍາບານ;
9. ປະຈຳການ;
10. ໃຫ້ຂໍ້ມູນແກ່ ຄົນເຈັບ ແລະ ຍາດພີ່ນ້ອງ;
11. ຮັກສາຄວາມລັບຂອງຄົນເຈັບ;
12. ອອກໃບຢັ້ງຢືນການແພດ;
13. ພັດທະນາວິຊາຊີບ ຢ່າງຕໍ່ເນື່ອງ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 (ປັບປຸງ) ການກວດພະຍາດ**

ຜູ້ປະກອບວິຊາຊີບປິ່ນປົວ ທີ່ເປັນແພດປິ່ນປົວ ຕ້ອງກວດພະຍາດໃຫ້ຄົນເຈັບ ດ້ວຍຄວາມຮັບຜິດຊອບສູງ, ວ່ອງໄວ ແລະ ທັນເວລາ ໂດຍນຳໃຊ້ຄວາມຮູ້, ປະສົບການ, ອຸປະກອນການແພດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ເໝາະສົມ ເພື່ອຊ່ວຍບົ່ງມະຕິພະຍາດ ໃຫ້ມີຄວາມຊັດເຈນ.



สแกนด้วย CamScanner

ມາດຕາ 28 (ປັບປຸງ) ການບົ່ງມະຕິພະຍາດ

ຜູ້ປະກອບວິຊາຊີບປິ່ນປົວ ທີ່ເປັນແພດປິ່ນປົວ ຕ້ອງບົ່ງມະຕິພະຍາດໃຫ້ຖືກຕ້ອງ, ຊັດເຈນ ແລະ ມີຄວາມຮັບຜິດຊອບສູງ ດ້ວຍການນຳໃຊ້ຂໍ້ມູນ, ຫຼັກຖານຈາກ ຜົນຂອງການກວດ, ການວິເຄາະປະເພດຕ່າງໆ ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດວິທີການປິ່ນປົວ ແລະ ຟື້ນຟູສຸຂະພາບຂອງຄົນເຈັບ.

ມາດຕາ 29 (ປັບປຸງ) ການອອກໃບສັ່ງປິ່ນປົວ

ຜູ້ປະກອບວິຊາຊີບປິ່ນປົວ ທີ່ເປັນແພດປິ່ນປົວ ຕ້ອງອອກໃບສັ່ງປິ່ນປົວ ແນໃສ່ເຮັດໃຫ້ການປິ່ນປົວ ດຳເນີນໄປຢ່າງຖືກຕ້ອງ, ເໝາະສົມ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ.

ມາດຕາ 30 (ໃໝ່) ການດຳເນີນຫັດຖະການທາງການແພດ

ຜູ້ປະກອບວິຊາຊີບປິ່ນປົວ ດຳເນີນຫັດຖະການທາງການແພດ ດ້ວຍການນຳໃຊ້ ຫຼື ບໍ່ນຳໃຊ້ ອຸປະກອນການແພດໃຫ້ຖືກຕ້ອງ ຕາມຫຼັກວິຊາການ ຕໍ່ຮ່າງກາຍຄົນເຈັບ ເຊັ່ນ ການຜ່າຕັດ, ການສັກ, ການເຈາະ, ການດູດ, ການຂູດ, ການຖູ, ການປັກເຂັມ, ການນວດ ແລະ ການຝຶກແອບຮ່າງກາຍ ລວມທັງ ສັນຍະກຳຕົບແຕ່ງ, ເສີມຄວາມງາມ.

ມາດຕາ 31 (ປັບປຸງ) ການວາງຢາ

ຜູ້ປະກອບວິຊາຊີບປິ່ນປົວ ທີ່ເປັນແພດປິ່ນປົວ ຕ້ອງວາງຢາ ດ້ວຍການອອກໃບສັ່ງຢາ ໃຫ້ຈະແຈ້ງ, ຊັດເຈນ ແລະສາມາດອ່ານອອກໄດ້ ຊຶ່ງປະກອບດ້ວຍ:

1. ຊື່ ແລະ ນາມສະກຸນ, ອາຍຸ, ນ້ຳໜັກ, ອາຊີບ ບ່ອນຢູ່ປັດຈຸບັນ ຂອງຄົນເຈັບ;
2. ຊື່ພະຍາດ;
3. ຊື່ຢາ, ຄວາມແຮງ, ຈຳນວນ, ວິທີ ແລະ ໄລຍະເວລາ ນຳໃຊ້ຢາ;
4. ວັນ, ເດືອນ, ປີ ຂຽນໃບສັ່ງຢາ;
5. ຊື່ ແລະ ນາມສະກຸນ ພ້ອມດ້ວຍລາຍເຊັນ ຫຼື ລະຫັດເອເລັກໂຕຣນິກ ຂອງແພດປິ່ນປົວ.

ມາດຕາ 32 ການຈ່າຍຢາ

ການຈ່າຍຢາ ດຳເນີນໂດຍເພສັດຊະກອນ, ພະຍາບານ ຫຼື ຜະດຸງຄັນ ຊຶ່ງຕ້ອງປະຕິບັດຕາມໃບສັ່ງຢາຂອງທ່ານໝໍ ຫຼື ທັນຕະແພດ ຢ່າງເຂັ້ມງວດ ພ້ອມທັງໃຫ້ຄຳແນະນຳການນຳໃຊ້ຢາ ຢ່າງລະອຽດແກ່ຄົນເຈັບ.

ມາດຕາ 33 (ປັບປຸງ) ການແນະນຳດ້ານການແພດ

ຜູ້ປະກອບວິຊາຊີບປິ່ນປົວ ຕ້ອງແນະນຳ ສະພາບການເຈັບເປັນ ແລະ ວິທີການປິ່ນປົວ ຫຼັງຈາກ ການກວດພະຍາດ, ການບົ່ງມະຕິພະຍາດ ແລ້ວ ເພື່ອໃຫ້ຄົນເຈັບ ຫຼື ຍາດພີ່ນ້ອງຂອງຄົນເຈັບ ຮູ້ ແລະ ປະຕິບັດ ຢ່າງຖືກຕ້ອງ.

ມາດຕາ 34 (ປັບປຸງ) ການໃຫ້ການພະຍາບານ

ການໃຫ້ການພະຍາບານ ແມ່ນ ການປົວລະບັດ, ປິ່ນປົວ ແລະ ຕິດຕາມສະພາບຄົນເຈັບ ຢ່າງໃກ້ຊິດ ແລະ ຕໍ່ເນື່ອງພ້ອມທັງບັນທຶກ ໂດຍຜູ້ປະກອບວິຊາຊີບປິ່ນປົວ ເປັນຕົ້ນ ພະຍາບານ, ຜະດຸງຄັນ, ນັກກາຍະພາບບຳບັດ.

ການໃຫ້ການພະຍາບານ ຕ້ອງປະຕິບັດຢ່າງຖືກຕ້ອງຕາມໃບສັ່ງປິ່ນປົວຂອງທ່ານໝໍປິ່ນປົວ ແລະ ນຳໃຊ້ສິດແລະ ປະຕິບັດໜ້າທີ່ ຕາມຄວາມຮັບຜິດຊອບຂອງຜູ້ປະກອບວິຊາຊີບປິ່ນປົວທີ່ກ່ຽວຂ້ອງ.



สแกนด้วย CamScanner

**ມາດຕາ 35 (ປັບປຸງ) ການປະຈຳການ**

ການປະຈຳການ ແມ່ນ ການປະຕິບັດໜ້າທີ່ ແລະ ການເວນຍາມ ຂອງຜູ້ປະກອບວິຊາຊີບປິ່ນປົວ ຢູ່ສະຖານທີ່ບໍລິການປິ່ນປົວ ເພື່ອຮັບປະກັນການບໍລິການຄົນເຈັບ ຢ່າງມີປະສິດທິພາບ ແລະ ແກ້ໄຂໃຫ້ທັນກັບສະພາບການທີ່ເກີດຂຶ້ນ ຕະຫຼອດ ຊາວສີ່ຊົ່ວໂມງ ຕາມລະບຽບການ ທີ່ກະຊວງສາທາລະນະສຸກ ກຳນົດໃນແຕ່ລະໄລຍະ.

**ມາດຕາ 36 (ປັບປຸງ) ການໃຫ້ຂໍ້ມູນແກ່ຄົນເຈັບ ແລະ ຍາດພີ່ນ້ອງ**

ຜູ້ປະກອບວິຊາຊີບປິ່ນປົວ ຕ້ອງໃຫ້ຂໍ້ມູນ ກ່ຽວກັບການແພດ ທີ່ບໍ່ເປັນຄວາມລັບ ແກ່ຄົນເຈັບ, ຍາດພີ່ນ້ອງ ເຊັ່ນ ການກວດພະຍາດ, ການບົ່ງມະຕິພະຍາດ, ການປິ່ນປົວ, ການຟື້ນຟູໜ້າທີ່ການ, ການກັນພະຍາດ, ຄວາມສ່ຽງ, ຜົນຮ້າຍ, ລະດັບຄວາມຮ້າຍແຮງ ແລະ ຄ່າບໍລິການປິ່ນປົວ.

ໃນກໍລະນີ ມີການປ່ຽນສະຖານທີ່ບໍລິການປິ່ນປົວນັ້ນ ຜູ້ປະກອບວິຊາຊີບປິ່ນປົວ ຕ້ອງແຈ້ງຄວາມສ່ຽງ ກ່ຽວກັບສະພາບການເຈັບເປັນຂອງຄົນເຈັບ ພ້ອມທັງສົ່ງບົດບັນທຶກການປິ່ນປົວໄປໃຫ້ສະຖານທີ່ບໍລິການປິ່ນປົວບ່ອນໃໝ່.

**ມາດຕາ 37 ການຮັກສາຄວາມລັບຂອງຄົນເຈັບ**

ຜູ້ປະກອບວິຊາຊີບປິ່ນປົວ ຕ້ອງຮັກສາຄວາມລັບ ຢ່າງເຂັ້ມງວດ ກ່ຽວກັບພະຍາດ, ຈຸດດຳນິ ຂອງຄົນເຈັບ ທີ່ຍັງມີຊີວິດ ຫຼື ເສຍຊີວິດແລ້ວ ເພື່ອຜົນປະໂຫຍດຂອງຄົນເຈັບເອງ, ຍົກເວັ້ນກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 38 (ປັບປຸງ) ການອອກໃບຢັ້ງຢືນການແພດ**

ຜູ້ປະກອບວິຊາຊີບປິ່ນປົວ ຕ້ອງອອກໃບຢັ້ງຢືນການແພດ ໃຫ້ຖືກຕ້ອງຕາມຄວາມເປັນຈິງ, ຫຼັກວິທະຍາສາດການແພດ ຕາມແບບພິມທີ່ກະຊວງສາທາລະນະສຸກ ກຳນົດ ເພື່ອນຳໃຊ້ເປັນຫຼັກຖານທາງດ້ານກົດໝາຍ.

ໃບຢັ້ງຢືນການແພດ ແມ່ນ ເອກະສານຢັ້ງຢືນກ່ຽວກັບ ສຸຂະພາບ, ການແຈ້ງເກີດ, ການແຈ້ງເສຍຊີວິດ, ການເສຍອົງຄະ ແລະ ການຢັ້ງຢືນອື່ນທີ່ກ່ຽວຂ້ອງ.

**ມາດຕາ 39 (ປັບປຸງ) ການພັດທະນາວິຊາຊີບຢ່າງຕໍ່ເນື່ອງ**

ການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແມ່ນ ການຍົກລະດັບຄວາມສາມາດດ້ານວິຊາຊີບປິ່ນປົວ ດ້ວຍການເຂົ້າຮ່ວມການຝຶກອົບຮົມໄລຍະສັ້ນ, ໄລຍະຍາວ, ການສຳມະນາ, ການປະຊຸມທາງວິຊາການ, ການສິດສອນ ແລະ ການຮຽນທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ, ການຄົ້ນຄວ້າວິທະຍາສາດ, ການປະກອບສ່ວນໃຫ້ສັງຄົມ, ການຮຽນຮູ້ດ້ວຍຕົນເອງ ເພື່ອຍົກສູງຄຸນນະພາບການກວດພະຍາດ, ການບົ່ງມະຕິພະຍາດ ແລະ ການປິ່ນປົວ ຂອງຜູ້ປະກອບວິຊາຊີບປິ່ນປົວ ໃຫ້ທັນກັບຄວາມກ້າວໜ້າທາງດ້ານວິທະຍາສາດການແພດທີ່ທັນສະໄໝ ເພື່ອຜົນປະໂຫຍດ ແລະ ຄວາມປອດໄພຂອງຄົນເຈັບ.

**ມາດຕາ 40 (ປັບປຸງ) ຈັນຍາບັນຂອງຜູ້ປະກອບວິຊາຊີບປິ່ນປົວ**

ຈັນຍາບັນຂອງຜູ້ປະກອບວິຊາຊີບປິ່ນປົວ ມີ ດັ່ງນີ້:

1. ເຄົາລົບ ສິດໃນການມີຊີວິດ ແລະ ກຽດສັກສີ ຂອງຄົນເຈັບ, ຍາດພີ່ນ້ອງຂອງຄົນເຈັບ ໂດຍບໍ່ມີການຈຳແນກ ລວມທັງບໍ່ໃຫ້ໝິ່ນປະໝາດຊາກສົບ;

2. ມີມະນຸດສຳພັນດີ, ມີຄວາມສຸພາບຮຽບຮ້ອຍ, ມີຄວາມມານະອົດທົນ, ບໍ່ມີອະຄະຕິ ແລະ ປະຕິກິລິຍາຕໍ່ວາຈາ ແລະ ການສະແດງອອກທີ່ບໍ່ເໝາະສົມ ຂອງຄົນເຈັບ ແລະ ຍາດພີ່ນ້ອງ;



สแกนด้วย CamScanner

3. ເກັບຄ່າບໍລິການປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ໂດຍບໍ່ຮຽກຮ້ອງ ມູນຄ່າເພີ່ມເຕີມໃດໆ;

4. ຮັບຟັງຄວາມຄິດຄວາມເຫັນ, ຈຸດປະສົງ ແລະ ການຕັດສິນໃຈຂອງຄົນເຈັບ ບົນພື້ນຖານກົດໝາຍ;

5. ຊ່ວຍເຫຼືອຄົນເຈັບທີ່ກຳລັງຕົກຢູ່ໃນສະພາບອັນຕະລາຍ ດ້ວຍຄວາມບໍລິສຸດໃຈ ເມື່ອຕົນມີເງື່ອນໄຂຊ່ວຍໄດ້ ໂດຍບໍ່ປະຕິເສດ ຫຼື ຫຼົບຫຼີກການຊ່ວຍເຫຼືອດັ່ງກ່າວ;

6. ໃຫ້ກຳລັງໃຈ, ລະດົມ ຄົນເຈັບ ແລະ ຍາດພີ່ນ້ອງ ເພື່ອໃຫ້ການຮ່ວມມືໃນການປິ່ນປົວ;

7. ປະຕິບັດເຕັກນິກການປິ່ນປົວ ບົນພື້ນຖານວິທະຍາສາດການແພດ ເພື່ອຊ່ວຍຄົນເຈັບຟື້ນຟູສຸຂະພາບ;

8. ເຄົາລົບ ແລະ ນັບຖື ເພື່ອນຮ່ວມວິຊາຊີບດຽວກັນ ລວມທັງການໃຫ້ຄຳແນະນຳຊ່ວຍເຫຼືອຜູ້ມີປະສົບການໜ້ອຍ;

9. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທຳ, ໂປ່ງໃສ, ມີສະຕິ ແລະ ມີຄວາມຮັບຜິດຊອບ.

### ມາດຕາ 41 (ປັບປຸງ) ການກວດສອບດ້ວຍວິທະຍາສາດການແພດ

ການກວດສອບດ້ວຍວິທະຍາສາດການແພດ ແມ່ນ ການວິເຄາະ, ວິໄຈ ຫາຄວາມຈິງ ເພື່ອຢັ້ງຢືນຄວາມຖືກຕ້ອງ ຫຼື ຄວາມຜິດພາດ ກ່ຽວກັບການປິ່ນປົວ ຕາມການສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

ການດຳເນີນການກວດສອບດ້ວຍວິທະຍາສາດການແພດ ຕ້ອງມີການແຕ່ງຕັ້ງຜູ້ມີປະສົບການດ້ານວິຊາຊີບປິ່ນປົວ ຫຼື ດ້ານນິຕິເວດ ໂດຍລັດຖະມົນຕີກະຊວງສາທາລະນະສຸກ.

ບໍ່ອະນຸຍາດໃຫ້ແຕ່ງຕັ້ງຜູ້ປະກອບວິຊາຊີບປິ່ນປົວ ທີ່ທຳການປິ່ນປົວຄົນເຈັບ ເປັນຜູ້ກວດສອບ. ໃນກໍລະນີ ຜູ້ກ່ຽວຫາກເປັນສະມາຊິກໃນຄອບຄົວ, ຍາດພີ່ນ້ອງ, ໝູ່ເພື່ອນ ຂອງຄົນເຈັບ ລວມທັງ ບຸກຄົນ, ກຸ່ມຄົນທີ່ຜູ້ກ່ຽວມີຜົນປະໂຫຍດຮ່ວມກັນ ກໍບໍ່ອະນຸຍາດ ໃຫ້ເຂົ້າຮ່ວມໃນການກວດສອບ.

## ໝວດທີ 2
## ຄະນະກຳມະການວິຊາຊີບປິ່ນປົວ

### ມາດຕາ 42 (ໃໝ່) ຄະນະກຳມະການວິຊາຊີບປິ່ນປົວ

ຄະນະກຳມະການວິຊາຊີບປິ່ນປົວ ແມ່ນ ການຈັດຕັ້ງວິຊາຊີບໜຶ່ງ ທີ່ບໍ່ປະຈຳການຂຶ້ນກັບສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ມີພາລະບົດບາດໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ດ້ານວິຊາການ ກ່ຽວກັບການຄວບຄຸມຄຸນນະພາບ, ຄວາມສາມາດ, ຄວາມຮັບຜິດຊອບ, ຈັນຍາບັນ, ຈັນຍາທຳ, ມາດຕະຖານການປະຕິບັດງານທີ່ດີຂອງຜູ້ປະກອບວິຊາຊີບປິ່ນປົວ, ການບໍລິການປິ່ນປົວ, ປົກປ້ອງສິດ, ຜົນປະໂຫຍດຂອງຜູ້ຮັບ ແລະ ຜູ້ໃຫ້ບໍລິການປິ່ນປົວ.

ສຳລັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການວິຊາຊີບປິ່ນປົວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 43 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການວິຊາຊີບປິ່ນປົວ

ຄະນະກຳມະການວິຊາຊີບປິ່ນປົວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ພັດທະນາ ກົດລະບຽບ, ຄຳແນະນຳ, ຄູ່ມື ກ່ຽວກັບວິຊາຊີບປິ່ນປົວ;
2. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ ນະໂຍບາຍ, ລະບຽບການ ກ່ຽວກັບຜູ້ປະກອບວິຊາຊີບປິ່ນປົວ;
3. ໂຄສະນາ ເຜີຍແຜ່ ກົດລະບຽບ, ຄຳແນະນຳ, ຄູ່ມື ກ່ຽວກັບວິຊາຊີບປິ່ນປົວ;
4. ຈັດຕັ້ງປະຕິບັດການພັດທະນາວິຊາຊີບປິ່ນປົວຢ່າງຕໍ່ເນື່ອງ;



สแกนด้วย CamScanner

5. ຕິດຕາມ, ກວດກາ, ຊຸກຍູ້ ຜູ້ປະກອບວິຊາຊີບປິ່ນປົວ ດ້ານ ຂອບເຂດ, ມາດຕະຖານ ແລະ ຈັນຍາບັນ ການປະຕິບັດງານທີ່ດີ;

6. ຕີລາຄາ ແລະ ປະເມີນຜົນ ການເຄື່ອນໄຫວຂອງຜູ້ປະກອບວິຊາຊີບປິ່ນປົວ;

7. ຄົ້ນຄວ້າ, ສະເໜີ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ເພື່ອໃຫ້ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ພິຈາລະນາ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IV
## ທຸລະກິດ ກ່ຽວກັບການປິ່ນປົວ

**ມາດຕາ 44 (ໃໝ່) ປະເພດທຸລະກິດກ່ຽວກັບການປິ່ນປົວ**

ທຸລະກິດກ່ຽວກັບການປິ່ນປົວ ມີ ປະເພດ ດັ່ງນີ້:

1. ໂຮງໝໍເອກະຊົນ;
2. ສູນປິ່ນປົວ ຫຼື ສູນການແພດເອກະຊົນ;
3. ຫ້ອງກວດພະຍາດເອກະຊົນ.

**ມາດຕາ 45 (ໃໝ່) ການຮ້ອງຂໍດຳເນີນທຸລະກິດ ກ່ຽວກັບການປິ່ນປົວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການປິ່ນປົວ ໃນກິດຈະການທົ່ວໄປ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳກະຊວງສາທາລະນະສຸກ ດ້ວຍຄຳຮ້ອງ ແລະ ເອກະສານປະກອບຕາມແບບພິມທີ່ກະຊວງສາທາລະນະສຸກ ກຳນົດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການປິ່ນປົວ ໃນກິດຈະການທີ່ນອນຢູ່ໃນບັນຊີຄວບຄຸມ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດລົງທຶນນຳຂະແໜງການແຜນການ ແລະ ການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳກະຊວງສາທາລະນະສຸກ ດ້ວຍຄຳຮ້ອງ ແລະ ເອກະສານປະກອບຕາມແບບພິມທີ່ກະຊວງສາທາລະນະສຸກ ກຳນົດ.

ສຳລັບຫ້ອງກວດພະຍາດເອກະຊົນທີ່ສ້າງຕັ້ງຂຶ້ນກ່ອນກົດໝາຍສະບັບນີ້ແລ້ວ ກໍໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍໃນເວລາໜຶ່ງຮ້ອຍຊາວວັນ ນັບແຕ່ວັນທີກົດໝາຍສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

**ມາດຕາ 46 (ໃໝ່) ເງື່ອນໄຂໃນການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບການປິ່ນປົວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີທຶນ, ໂຄງລ່າງພື້ນຖານ ຫຼື ສິ່ງປຸກສ້າງ, ບຸກຄະລາກອນ, ວັດຖຸປະກອບ ແລະ ພາຫະນະຮັບໃຊ້ ຕາມແຕ່ລະປະເພດທຸລະກິດ ຢ່າງເໝາະສົມ;



สแกนด้วย CamScanner

3. ມີຜູ້ບໍລິຫານຄຸ້ມຄອງ, ຜູ້ອໍານວຍການ ຝ່າຍວິຊາການແພດ ສໍາລັບໂຮງໝໍເອກະຊົນ, ສ່ວນຕ່າງປະເທດມາລົງທຶນນັ້ນ ຍັງຕ້ອງມີແພດປິ່ນປົວ ທີ່ເປັນຄົນສັນຊາດລາວຢ່າງໜ້ອຍ ໜຶ່ງທ່ານ;

4. ມີນັກວິຊາການ ທີ່ຮຽນຈົບວິຊາການແພດສາຂາໃດໜຶ່ງ ລະດັບຊັ້ນສູງຂຶ້ນໄປ, ມີໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ທີ່ອອກໃຫ້ໂດຍສະພາຄຸ້ມຄອງວິຊາຊີບສາທາລະນະສຸກ;

5. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທໍາຜິດ ໂດຍເຈດຕະນາ;

6. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 47 (ໃໝ່) ການພິຈາລະນາ ແລະ ການອະນຸຍາດດໍາເນີນທຸລະກິດກ່ຽວກັບການປິ່ນປົວ**

ກະຊວງສາທາລະນະສຸກ ຕ້ອງພິຈາລະນາ ອອກໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການປິ່ນປົວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນ ໄດ້ຮັບຄໍາຮ້ອງຂໍ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດໍາເນີນທຸລະກິດໄດ້ ກໍໃຫ້ແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍ ພາຍໃນກໍານົດເວລາດັ່ງກ່າວ.

ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການປິ່ນປົວ ມີອາຍຸການຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້ ຕາມລະບຽບການທີ່ກ່ຽວຂ້ອງ.

ໃບອະນຸຍາດດໍາເນີນທຸລະກິດ ບໍ່ສາມາດໂອນ ຫຼື ມອບໃຫ້ບຸກຄົນອື່ນນໍາໃຊ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 48 (ໃໝ່) ການກໍານົດລາຄາປິ່ນປົວ**

ຜູ້ດໍາເນີນທຸລະກິດການປິ່ນປົວ ຕ້ອງກໍານົດຄ່າບໍລິການ ແລະ ຄ່າປິ່ນປົວ ຢ່າງສົມເຫດສົມຜົນຕາມກົນໄກການຕະຫຼາດ ແລະ ເປີດເຜີຍ ໂດຍມີການຄຸ້ມຄອງຂອງລັດ.

**ມາດຕາ 49 (ໃໝ່) ການໂຈະການດໍາເນີນທຸລະກິດ**

ການດໍາເນີນທຸລະກິດ ກ່ຽວກັບການປິ່ນປົວ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດໍາເນີນທຸລະກິດ;
2. ດໍາເນີນທຸລະກິດ ບໍ່ຖືກຕ້ອງຕາມກິດຈະການທີ່ໄດ້ຮັບອະນຸຍາດ ຫຼື ລະເມີດກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີ ຜູ້ດໍາເນີນທຸລະກິດ ຫາກບໍ່ປັບປຸງ ແລະ ແກ້ໄຂຈຸດບົກພ່ອງ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມການແຈ້ງເຕືອນ ສອງຄັ້ງ, ຄັ້ງລະ ສາມສິບວັນ ແລ້ວ ຂະແໜງການສາທາລະນະສຸກ ອອກຄໍາສັ່ງໂຈະການດໍາເນີນທຸລະກິດ.

**ມາດຕາ 50 (ໃໝ່) ການຖອນໃບອະນຸຍາດດໍາເນີນທຸລະກິດ**

ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການປິ່ນປົວ ຈະຖືກຖອນ ໃນກໍລະນີ ຜູ້ດໍາເນີນທຸລະກິດ ບໍ່ປະຕິບັດຕາມຄໍາສັ່ງໂຈະ.

ພາຍຫຼັງໄດ້ຖອນໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການປິ່ນປົວແລ້ວ ຂະແໜງການສາທາລະນະສຸກຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດໍາເນີນທຸລະກິດ ເປັນຕົ້ນໄປ.



สแกนด้วย CamScanner

## ພາກທີ V
## ການເງິນດ້ານການປິ່ນປົວ

**ມາດຕາ 51 (ປັບປຸງ) ການເງິນດ້ານການປິ່ນປົວ**

ການເງິນດ້ານການປິ່ນປົວ ແມ່ນ ການເງິນກ່ຽວກັບ ລາຍຮັບ ແລະ ລາຍຈ່າຍ ໃນການບໍລິການປິ່ນປົວ ແລະ ການຄຸ້ມຄອງຢ່າງເປັນລະບົບ ຕາມກົດໝາຍ ແລະ ລະບຽບການ ແນໃສ່ເຮັດໃຫ້ພົນລະເມືອງທຸກຄົນໄດ້ເຂົ້າເຖິງ ການບໍລິການປິ່ນປົວ ຢ່າງສະເໝີພາບ, ຍຸຕິທຳ ແລະ ມີສຸຂະພາບດີ.

**ມາດຕາ 52 (ປັບປຸງ) ແຫຼ່ງການເງິນດ້ານການປິ່ນປົວ**

ການເງິນດ້ານການປິ່ນປົວ ໄດ້ມາຈາກ:

1. ງົບປະມານຂອງລັດ ສໍາລັບພາກລັດ;
2. ກອງທຶນປະກັນສຸຂະພາບແຫ່ງຊາດ;
3. ການເກັບໂດຍກົງຈາກຜູ້ຮັບບໍລິການ;
4. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງການເງິນດ້ານການປິ່ນປົວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 53 (ປັບປຸງ) ການເສຍຄ່າປິ່ນປົວດ້ວຍຕົນເອງ**

ບຸກຄົນທີ່ບໍ່ໄດ້ເຂົ້າເປັນສະມາຊິກປະກັນສຸຂະພາບ ໃຫ້ເສຍຄ່າປິ່ນປົວດ້ວຍຕົນເອງ ໃນເວລາມາກວດພະຍາດ ແລະ ປິ່ນປົວ ຢູ່ ສະຖານທີ່ບໍລິການປິ່ນປົວ. ສໍາລັບບຸກຄົນທີ່ເປັນສະມາຊິກປະກັນສຸຂະພາບ ໃຫ້ເສຍຄ່າປິ່ນປົວຕາມ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 54 (ປັບປຸງ) ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປິ່ນປົວ**

ຄ່າທຳນຽມ ໃຫ້ເກັບຈາກການບໍລິການອອກເອກະສານ ກ່ຽວກັບການປິ່ນປົວ ເປັນຕົ້ນ ປຶ້ມຕິດຕາມການປິ່ນປົວ, ບັດຄົນເຈັບ.

ຄ່າບໍລິການ ໃຫ້ເກັບຈາກການບໍລິການຕ່າງໆ ເປັນຕົ້ນ ໃບຢັ້ງຢືນການແພດ, ຄ່າລົດນຳສົ່ງຄົນເຈັບ, ຄ່າຫ້ອງນອນ.

ຄ່າປິ່ນປົວ ໃຫ້ເກັບຈາກການບໍລິການປິ່ນປົວຕ່າງໆ ເປັນຕົ້ນ ການກວດພະຍາດ, ການກວດວິເຄາະ, ການສ່ອງ ລັງສີ, ການຜ່າຕັດ, ຄ່າຢາ, ຜະລິດຕະພັນການແພດ.

ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປິ່ນປົວ ຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ໃຫ້ປະຕິບັດຕາມ ລະບຽບການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

ສໍາລັບການເກັບຄ່າບໍລິການ ແລະ ຄ່າປິ່ນປົວ ຢູ່ສະຖານທີ່ບໍລິການປິ່ນປົວຂອງເອກະຊົນ ໃຫ້ປະຕິບັດຕາມ ການກຳນົດຂອງສະຖານທີ່ບໍລິການປິ່ນປົວດັ່ງກ່າວ ແລະ ຕ້ອງແຈ້ງຄ່າບໍລິການ ແລະ ຄ່າປິ່ນປົວ ໃຫ້ຜູ້ຮັບບໍລິການ ກ່ອນການບໍລິການປິ່ນປົວ.

**ມາດຕາ 55 (ປັບປຸງ) ການຄຸ້ມຄອງ ແລະ ການນຳໃຊ້ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປິ່ນປົວ**

ການຄຸ້ມຄອງ ແລະ ການນຳໃຊ້ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປິ່ນປົວ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.



สแกนด้วย CamScanner

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 56 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ, ໃຊ້ຄວາມຮຸນແຮງ ແລະ ບັງຄັບ ນາຍຊ່າງ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວ ແລະ ການປະຕິບັດໜ້າທີ່;
2. ໃຫ້ ຫຼື ຮັບ ສິນບົນ, ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ໂຄສະນາ ເຜີຍແຜ່ ຫຼື ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປິ່ນປົວ ທຸກຮູບແບບເກີນຄວາມຈິງ;
4. ໃຫ້ບໍລິການຖືພາແທນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ດຳເນີນການປິ່ນປົວ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 57 (ປັບປຸງ) ຂໍ້ຫ້າມສຳລັບຜູ້ປະກອບວິຊາຊີບປິ່ນປົວ**

ຫ້າມ ຜູ້ປະກອບວິຊາຊີບປິ່ນປົວ ມີພຶດຕິກຳ ດັ່ງນີ້:

1. ຈຳແນກ, ເມີນເສີຍ ແລະ ປະລະໜ້າທີ່ຕໍ່ການປິ່ນປົວຄົນເຈັບ;
2. ໃຫ້ບໍລິການປິ່ນປົວ ໂດຍຖືເອົາຜົນກຳໄລເປັນຕົ້ນຕໍ, ຖ່ວງດຶງຄົນເຈັບ, ໂຄສະນາເກີນຄວາມເປັນຈິງ ຫຼື ຍາດແຍ່ງຄົນເຈັບ;
3. ອອກໃບຢັ້ງຢືນການແພດ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
4. ເຮັດການຄ້າຜະລິດຕະພັນ ຫຼື ອະໄວຍະວະໃດໜຶ່ງ ຈາກຮ່າງກາຍຂອງຄົນ;
5. ດຳເນີນການປິ່ນປົວຢູ່ສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດ;
6. ດຳເນີນການປິ່ນປົວ ບໍ່ຖືກຕ້ອງຕາມວິຊາຊີບທີ່ຕົນໄດ້ຮັບອະນຸຍາດ;
7. ດຳເນີນການປິ່ນປົວທີ່ບໍ່ຖືກຕ້ອງຕາມຫຼັກວິຊາການແພດ;
8. ເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃຫ້ຜູ້ອື່ນ ຢືມ ຫຼື ນຳໃຊ້;
9. ຮັບເອົາຜູ້ທີ່ບໍ່ມີໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ເຂົ້າເຮັດວຽກປິ່ນປົວໃນສະຖານທີ່ບໍລິການປິ່ນປົວຂອງຕົນ;
10. ນຳໃຊ້ໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແທນໃບອະນຸຍາດເປີດຫ້ອງກວດພະຍາດເອກະຊົນ;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 58 (ປັບປຸງ) ຂໍ້ຫ້າມສຳລັບຄົນເຈັບ**

ຫ້າມ ຄົນເຈັບ ມີພຶດຕິກຳ ດັ່ງນີ້:

1. ອອກໂຮງໝໍ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປະພຶດຕົນບໍ່ເໝາະສົມ ແລະ ໃຊ້ຄວາມຮຸນແຮງຕໍ່ຜູ້ປະກອບວິຊາຊີບປິ່ນປົວ;
3. ລັດຄິວ, ລະເມີດ ຄຳສັ່ງ ແລະ ຄຳແນະນຳ ຂອງຜູ້ປະກອບວິຊາຊີບປິ່ນປົວ;
4. ສົມຮູ້ຮ່ວມຄິດກັບຜູ້ປະກອບວິຊາຊີບປິ່ນປົວ ເພື່ອອອກໃບຢັ້ງຢືນການແພດທີ່ບໍ່ຖືກຕ້ອງ;
5. ໃຫ້ຂໍ້ມູນ ກ່ຽວກັບສຸຂະພາບຕົນເອງ ທີ່ບໍ່ຖືກຕ້ອງຕາມຄວາມຈິງ ແກ່ຜູ້ປະກອບວິຊາຊີບປິ່ນປົວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;



สแกนด้วย CamScanner

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາ ວຽກງານປິ່ນປົວ
### ໝວດທີ 1
### ການຄຸ້ມຄອງວຽກງານປິ່ນປົວ

**ມາດຕາ 59 (ປັບປຸງ) ອົງການຄຸ້ມຄອງວຽກງານປິ່ນປົວ**

ລັດຖະບານ ຄຸ້ມຄອງວຽກງານປິ່ນປົວ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານ ສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປິ່ນປົວ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ;
4. ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ.

**ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານປິ່ນປົວ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ປິ່ນປົວ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ປິ່ນປົວ ເປັນ ແຜນການ, ແຜນງານ ແລະ ໂຄງການ ລະອຽດ ພ້ອມທັງຈັດຕັ້ງປະຕິບັດ;
3. ຄົ້ນຄວ້າ, ກຳນົດ ມາດຕະຖານ ກ່ຽວກັບວຽກງານປິ່ນປົວ;
4. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ລວມທັງ ມາດຕະຖານ ກ່ຽວກັບວຽກງານປິ່ນປົວ ໃນຂອບເຂດທົ່ວປະເທດ;
5. ນຳພາ ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດ ວຽກງານປິ່ນປົວ ໃນຂອບເຂດທົ່ວປະເທດ;
6. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ຂອງອົງການຄຸ້ມຄອງວຽກງານປິ່ນປົວຂັ້ນລຸ່ມ ທີ່ຂັດກັບກົດໝາຍ;
7. ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການປິ່ນປົວ;
8. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານປິ່ນປົວ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ,ຈັນຍາທຳ, ທັດສະ ແລະ ສິລະປະ;
9. ສະໜອງການບໍລິການວຽກງານປິ່ນປົວ ແລະ ຟື້ນຟູໜ້າທີ່ການ ເພື່ອຮັບປະກັນໃຫ້ພົນລະເມືອງ ເຂົ້າເຖິງ ການບໍລິການສາທາລະນະສຸກ ທີ່ຈຳເປັນພື້ນຖານ ຊຶ່ງມີຄຸນນະພາບ ແລະ ສົມເຫດສົມຜົນ;
10. ຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວຂອງ ຄະນະກຳມະການວິຊາຊີບປິ່ນປົວ, ສະຖານທີ່ບໍລິການ ປິ່ນປົວ ຂອງລັດ ແລະ ເອກະຊົນ, ຜູ້ປະກອບວິຊາຊີບປິ່ນປົວ ໃຫ້ຖືກຕ້ອງ ຕາມກົດໝາຍ;
11. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານປິ່ນປົວ;



สแกนด้วย CamScanner

12. ປະສານສົມທົບ ກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປິ່ນປົວ;

13. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປິ່ນປົວ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປິ່ນປົວ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານປິ່ນປົວ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ຂອງກະຊວງສາທາລະນະສຸກ ກ່ຽວກັບວຽກງານປິ່ນປົວ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ລວມທັງ ມາດຕະຖານ ກ່ຽວກັບວຽກງານປິ່ນປົວ;

3. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ໃນການ ຈັດຕັ້ງປະຕິບັດວຽກງານປິ່ນປົວ;

4. ເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບການປິ່ນປົວ, ແນະນຳ ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ສາມາດ ຮັກສາສຸຂະພາບຕົນ;

5. ຄົ້ນຄວ້າຄຳຮ້ອງຂອງບຸກຄົນ ທີ່ມີຈຸດປະສົງຂໍໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແລ້ວນຳສະເໜີ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ພິຈາລະນາ;

6. ຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວຂອງ ສະຖານທີ່ບໍລິການປິ່ນປົວ ຂອງລັດ ແລະ ເອກະຊົນ, ຜູ້ປະກອບວິຊາຊີບປິ່ນປົວ ໃຫ້ຖືກຕ້ອງ ຕາມກົດໝາຍ;

7. ອອກຄຳສັ່ງ ຢຸດຕິການເຄື່ອນໄຫວຂອງສະຖານທີ່ບໍລິການປິ່ນປົວຂອງເອກະຊົນ ທີ່ບໍ່ໄດ້ຮັບອະນຸຍາດ ລວມທັງການໂຈະ ການໃຫ້ບໍລິການຂອງສະຖານທີ່ບໍລິການປິ່ນປົວເອກະຊົນ ທີ່ບໍ່ຖືກຕ້ອງຕາມການອະນຸຍາດ ເພື່ອນຳ ສະເໜີກະຊວງສາທາລະນະສຸກ ພິຈາລະນາ;

8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ປິ່ນປົວ;

9. ປະສານສົມທົບ ກັບ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປິ່ນປົວ;

10. ພົວພັນ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປິ່ນປົວ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປິ່ນປົວ ຕໍ່ກະຊວງສາທາລະນະສຸກ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານປິ່ນປົວ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ປິ່ນປົວ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ;



สแกนด้วย CamScanner

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ລວມທັງມາດຕະຖານ ກ່ຽວກັບວຽກງານປິ່ນປົວ;

3. ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມ ສຸກສາລາ, ຄະນະກໍາມະການຮັກສາສຸຂະພາບຂັ້ນບ້ານ ໃນການຈັດຕັ້ງປະຕິບັດວຽກງານປິ່ນປົວ;

4. ເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບການປິ່ນປົວ, ແນະນໍາ ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ສາມາດຮັກສາສຸຂະພາບຕົນເອງ;

5. ຄົ້ນຄວ້າຄໍາຮ້ອງ ຂອງບຸກຄົນທີ່ມີຈຸດປະສົງຂໍໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແລ້ວນໍາສະເໜີພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ພິຈາລະນາສະເໜີສະພາຄຸ້ມຄອງວິຊາຊີບສາທາລະນະສຸກ;

6. ຄຸ້ມຄອງ ສະຖານທີ່ບໍລິການປິ່ນປົວ ຂອງລັດ ແລະ ເອກະຊົນ ລວມທັງຖົງຢາປະຈໍາບ້ານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປິ່ນປົວ;

8. ປະສານສົມທົບ ກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານປິ່ນປົວ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປິ່ນປົວ ຕໍ່ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 63 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກໍາມະການຮັກສາສຸຂະພາບຂັ້ນບ້ານ**

ໃນການຄຸ້ມຄອງວຽກງານປິ່ນປົວ ຄະນະກໍາມະການຮັກສາສຸຂະພາບຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງ ແລະ ແນະນໍາ ກ່ຽວກັບວຽກງານຮັກສາສຸຂະພາບ ໃຫ້ປະຊາຊົນ ມີຈິດສໍານຶກ ກ່ຽວກັບການປິ່ນປົວ;

2. ຕິດຕາມ ການເຄື່ອນໄຫວຂອງຜູ້ໃຫ້ບໍລິການປິ່ນປົວ;

3. ແຈ້ງ ຂໍ້ມູນ ຂ່າວສານ ກ່ຽວກັບການບໍລິການປິ່ນປົວ;

4. ເກັບກໍາຂໍ້ມູນ ກ່ຽວກັບການຮັກສາສຸຂະພາບ, ການແຜ່ລະບາດຂອງພະຍາດ;

5. ປຸກລະດົມປະຊາຊົນ ໃຫ້ໄປຮັບການບໍລິການປິ່ນປົວ ຢູ່ສະຖານທີ່ບໍລິການປິ່ນປົວ ໂດຍສະເພາະການປິ່ນປົວເດັກ ແລະ ການອອກລູກທີ່ປອດໄພ;

6. ສະຫຼຸບ ແລະ ລາຍງານວຽກງານຂອງຕົນ ໃຫ້ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 64 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານປິ່ນປົວ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງວຽກງານປິ່ນປົວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.



สแกนด้วย CamScanner

## ໝວດທີ 2
## ການກວດກາວຽກງານປິ່ນປົວ

**ມາດຕາ 65 (ປັບປຸງ) ອົງການກວດກາວຽກງານປິ່ນປົວ**

ອົງການກວດກາວຽກງານປິ່ນປົວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ພົນລະເມືອງ ແລະ ສື່ມວນຊົນ.

**ມາດຕາ 66 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານປິ່ນປົວ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປິ່ນປົວ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;
3. ມາດຕະຖານກ່ຽວກັບ ການປະກອບບຸກຄະລາກອນ, ອຸປະກອນການແພດ, ການຈັດຕັ້ງປະຕິບັດລະບອບຄຸ້ມຄອງວິຊາການ, ການຄຸ້ມຄອງບໍລິຫານ ແລະ ການເຄື່ອນໄຫວ ຂອງຜູ້ປະກອບວິຊາຊີບປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວ;
4. ການຄຸ້ມຄອງ ແລະ ການນຳໃຊ້ ແຫຼ່ງການເງິນດ້ານການປິ່ນປົວ;
5. ຈັນຍາບັນ, ຈັນຍາທຳ ຂອງຜູ້ປະກອບວິຊາຊີບປິ່ນປົວ;
6. ຜົນການແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປິ່ນປົວ;
7. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 67 (ປັບປຸງ) ຮູບການການກວດກາ**

ການກວດກາ ດຳເນີນດ້ວຍຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການກວດກາວຽກງານປິ່ນປົວ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.



สแกนด้วย CamScanner

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 68 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 69 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 70 (ປັບປຸງ) ວັນແພດລາວ**

ລັດ ກຳນົດເອົາວັນທີ 18 ມິຖຸນາ ຂອງທຸກປີເປັນວັນແພດລາວ ຊຶ່ງເປັນວັນດຽວກັນກັບວັນສາທາລະນະສຸກ.

ໃນແຕ່ລະປີ ຂະແໜງການສາທາລະນະສຸກ ສ້າງຂະບວນການ ແລະ ຈັດກິດຈະກຳ ເພື່ອລະນຶກເຖິງ ຜົນງານ ແລະ ສັນລະເສີນຄຸນງາມຄວາມດີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອປຸກລະດົມມວນຊົນ ໃຫ້ເຫັນຄວາມສຳຄັນ ແລະ ເປັນເຈົ້າການສົ່ງເສີມວຽກງານປິ່ນປົວ.

**ມາດຕາ 71 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 72 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 9 ມັງກອນ 2024 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການປິ່ນປົວ ສະບັບເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ



สแกนด้วย CamScanner